ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງ ພະລານໄຊ

ຫ້ອງການໂຍທາທິການ ແລະ ຂົນສົ່ງ

ເລກທີ.....18.../ຍທຂ.ພຊ

ເມືອງພະລານໄຊ, ວັນທີ.05.ມີນາ.2026

# ຈົດໝາຍເຊີນເຂົ້າຮ່ວມປະມູນ

- ອີງຕາມ ຂໍ້ຕົກລົງຂອງເຈົ້າເມືອງພະລານໄຊ, ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ສະບັບເລກທີ 307/ຈມ.ພຊ, ລົງວັນທີ 26 ມິຖຸນາ 2023.
- ອີງຕາມ ແຈ້ງການຂອງພະແນກການເງິນແຂວງ, ວ່າດ້ວຍແຈ້ງແຜນການລົງທຶນຂອງລັດປີ2026, ມອບໃຫ້ອົງການປົກຄອງເມືອງເປັນຜູ້ຈັດຕັ້ງປະຕິບັດ, ສະບັບເລກທີ 662/ກງຂ, ລົງວັນທີ 03 ມີນາ 2026.

ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງພະລານໄຊ, ມີຄວາມຍິນດີເຊີນ ບັນດາບໍລິສັດພາຍໃນແຂວງ ທີ່ມີໃບອະນຸຍາດດຳເນີນທຸລະກິດກໍ່ສ້າງຂົວ-ທາງ ໃນສົກປີງົບປະມານ, ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນໂຄງການກໍ່ສ້າງ ແລະ ສ້ອມແປງຂົວ-ທາງບ້ວງງົບປະມານການລົງທຶນຂອງລັດ, ເຊິ່ງມີໂຄງການດັ່ງນີ້:

1. ໂຄງການ ກໍ່ສ້າງ ແລະ ສ້ອມແປງເສັ້ນທາງດິນແດງ ພາຍໃນກຸ່ມບ້ານນາທອນ ຈຳນວນ 04 ເສັ້ນ, ລວງຍາວ: 17,9 ກິໂລແມັດ, ກວ້າງ: 5 ແມັດ, ເມືອງ ພະລານໄຊ.
2. ໂຄງການ ກໍ່ສ້າງ ແລະ ສ້ອມແປງເສັ້ນທາງເລກທີ RR 6520 ແຕ່ແຍກທາງເລກ 9 ບ້ານໂພນຕານ ຫາ ບ້ານນາຊາຍ ຫາ ບ້ານດອນຕື້ວ, ລວງຍາວ: 20 ກິໂລແມັດ, ກວ້າງ: 05 ແມັດ, ເມືອງ ພະລານໄຊ.
3. ໂຄງການ ກໍ່ສ້າງຂົວເບເລຫ້ວຍລະນາມ ເສັ້ນທາງເລກທີ 6517 ບ້ານ ພະລານໃຕ້, ລວງຍາວ: 21 ແມັດ, ກວ້າງ 5 ແມັດ, ເມືອງ ພະລານໄຊ.
4. ໂຄງການກໍ່ສ້າງ ແລະ ສ້ອມແປງເສັ້ນທາງດິນແດງທາງເລກທີ DR 6319 ແຕ່ແຍກທາງເລກ 9 ບ້ານໂພໄຊ ຫາ ບ້ານນາລາຍ ຫາ ສາມແຍກທາງເລກທີ 9 ບ້ານຫ້ວຍຫຍ້າພຶດ, (ຊ່ວງທີ2: ແຕ່ ກມ 18+000-35+000), ລວງຍາວ: 17 ກິໂລແມັດ, ກວ້າງ: 05 ແມັດ, ເຂດເມືອງ ພະລານໄຊ.

- ທ່ານສາມາດຊື້ເອກະສານປະມູນໄດ້ຢູ່ ຫ້ອງການການເງິນເມືອງ ພະລານໄຊ ໃນລາຄາ 500,000ກີບ/01ຊອງ, ເປີດຂາຍຊອງປະມູນເລີ່ມແຕ່ວັນທີ 06 ມີນາ 2026 ຫາ ວັນທີ 26 ມີນາ 2026 (ຕາມໂມງລັດຖະການ), ສຳລັບລາຍລະອຽດເພີ່ມເຕີມ ທ່ານສາມາດພົວພັນໄດ້ຢູ່ຫ້ອງການການເງິນເມືອງ, ເບີໂທຣ: 020 9136 6955.
- ຄ້ຳປະກັນການປະມູນ ມູນຄ່າຕ່ຳສຸດ 2% ຂອງມູນຄ່າທີ່ຍື່ນຊອງປະມູນ.
- ຕ້ອງມີໃບທະບຽນຄົບຊຸດເຊັ່ນ: ໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດໃນສົກປີງົບປະມານ ແລະ ໃບຢັ້ງຢືນມອບພັນທະອາກອນໃນປີ 2024 - 2025.
- ລົງຢ້ຽມຢາມສະໜາມຈະໄດ້ຈັດຂຶ້ນໃນຄັ້ງວັນທີ 26 ມີນາ 2026 ເລີ່ມແຕ່ເວລາ 9:00 ໂມງເປັນຕົ້ນໄປ.
- ກອງປະຊຸມກ່ອນການປະມູນ ຈະໄດ້ຈັດຂຶ້ນໃນ ວັນທີ 27 ມີນາ 2026 ເວລາ 14:00 ໂມງ
- ກຳນົດເປີດຊອງປະມູນ ໃນວັນທີ 09 ເມສາ 2026 ເວລາ 14:00ໂມງ ທຸກໆເອກະສານການປະມູນຈະເປີດຊ້ອງໜ້າຄະນະກຳມະການປະມູນ ແລະ ບໍລິສັດເຂົ້າຮ່ວມ, ຫ້ອງການ ຍທຂ ເມືອງພະລານໄຊ.

ຫົວໜ້າຫ້ອງການ ຍທຂ ເມືອງພະລານໄຊ

ຫ້ອງການ ໂຍທາທິການ ແລະ ຂົນສົ່ງ

ສົມທະລາ ຂົນສີຊຽງໃໝ່